ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ທະນາຄານແຫ່ງ ສປປ ລາວ

ເລກທີ 173 /ທຫລ
ນະຄອນຫຼວງວຽງຈັນ, ວັນທີ 04 ມີນາ 2026

ຂໍ້ຕົກລົງ
ວ່າດ້ວຍເງິນແຮຝາກບັງຄັບຂອງທະນາຄານທຸລະກິດ

- ອີງຕາມ ກົດໝາຍວ່າດ້ວຍທະນາຄານແຫ່ງ ສປປ ລາວ ສະບັບເລກທີ 66/ສພຊ, ລົງວັນທີ 11 ທັນວາ 2024;
- ອີງຕາມ ກົດໝາຍວ່າດ້ວຍທະນາຄານທຸລະກິດ ສະບັບເລກທີ 39/ສພຊ, ລົງວັນທີ 17 ກໍລະກົດ 2023;
- ອີງຕາມ ການຄົ້ນຄວ້າຂອງກົມນະໂຍບາຍເງິນຕາ ໂດຍສົມທົບກັບພາກສ່ວນທີ່ກ່ຽວຂ້ອງ.

ຜູ້ວ່າການ ອອກຂໍ້ຕົກລົງ:

ໝວດທີ 1
ບົດບັນຍັດທົ່ວໄປ

ມາດຕາ 1 ຈຸດປະສົງ

ຂໍ້ຕົກລົງສະບັບນີ້ ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບເງິນແຮຝາກບັງຄັບຂອງທະນາຄານທຸລະກິດ ເພື່ອເປັນບ່ອນອີງໃຫ້ແກ່ທະນາຄານທຸລະກິດ ໃນການຈັດຕັ້ງປະຕິບັດ ໃຫ້ສອດຄ່ອງກັບການດຳເນີນນະໂຍບາຍເງິນຕາທີ່ ທຫລ ກຳນົດ ແນໃສ່ຮັກສາສະຖຽນລະພາບທາງດ້ານເງິນຕາ ແລະ ຄວາມໝັ້ນຄົງຂອງທະນາຄານທຸລະກິດ.

ມາດຕາ 2 ເງິນແຮຝາກບັງຄັບຂອງທະນາຄານທຸລະກິດ

ເງິນແຮຝາກບັງຄັບຂອງທະນາຄານທຸລະກິດ ແມ່ນ ຈຳນວນເງິນທີ່ທະນາຄານທຸລະກິດ ຕ້ອງຝາກໄວ້ຢູ່ ທຫລ ໃນອັດຕາສ່ວນໃດໜຶ່ງ ຕາມການກຳນົດຂອງ ທຫລ ຊຶ່ງຈຳນວນເງິນດັ່ງກ່າວ ແມ່ນອັດຕາສ່ວນຈາກເງິນຝາກຂອງລູກຄ້າ ແລະ ໜີ້ສິນໄລຍະສັ້ນ ຂອງທະນາຄານທຸລະກິດ ເພື່ອສຳຮອງໄວ້ປ້ອງກັນຄວາມສ່ຽງ ໃນກໍລະນີທະນາຄານທຸລະກິດ ຂາດສະພາບຄ່ອງ ຫຼື ເກີດມີເຫດການຖອນເງິນຢ່າງຫຼວງຫຼາຍໃນເວລາດຽວກັນ ແລະ ເພື່ອຄວາມໝັ້ນຄົງທາງການເງິນ ແລະ ຮັກສາສະຖຽນລະພາບດ້ານເງິນຕາໃຫ້ໝັ້ນທ່ຽງ.

ມາດຕາ 3 ການອະທິບາຍຄຳສັບ

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ໄລຍະຖານ** ໝາຍເຖິງ ຮອບໄລຍະເວລາເປັນຈຳນວນວັນ ຊຶ່ງລວມທັງວັນລັດຖະການ ແລະ ວັນພັກ ທີ່ໃຊ້ຄິດໄລ່ເງິນແຮຝາກບັງຄັບ ໃຫ້ແກ່ຮອບໄລຍະຮັກສາ;

2. **ໄລຍະຮັກສາ** ໝາຍເຖິງ ຮອບໄລຍະເວລາເປັນຈຳນວນວັນ ທີ່ຕ້ອງຮັກສາເງິນແຮຝາກບັງຄັບໃຫ້ພຽງ ພໍ ແລະ ເປັນໄລຍະຖານ ທີ່ໃຊ້ຄິດໄລ່ເງິນແຮຝາກບັງຄັບ ສຳລັບໄລຍະຮັກສາຮອບຕໍ່ໄປ;

3. **ໜີ້ສິນໄລຍະສັ້ນ** ໝາຍເຖິງ ການກູ້ຢືມທຸກຮູບແບບຂອງທະນາຄານທຸລະກິດ ທີ່ເປັນພັນທະທາງການ ເງິນ ທັງພາຍໃນ ແລະ ຕ່າງປະເທດ ໃນໄລຍະ ໜຶ່ງປີ ລົງມາ ເປັນຕົ້ນ ການກູ້ຢືມເງິນລະຫວ່າງທະນາຄານ (ບໍ່ລວມເງິນກູ້ຈາກ ທຫລ), ການອອກໃບຢັ້ງຢືນເງິນຝາກ (Certificate of Deposit = CD), ການຂາຍຫຼັກ ຊັບພ້ອມສັນຍາຊື້ຄືນ (Repurchase Agreement = Repo), ສິນເຊື່ອ ແລະ ການຮັບປະກັນ (Credit Lines and Guarantees), ໜີ້ສິນຈາກເຄື່ອງມືທາງການເງິນ (Financial Instruments Liabilities or Derivative Liabilities);

4. **ຫຼັກຊັບທີ່ບໍ່ມີພາລະຜູກພັນ** ໝາຍເຖິງ ພັນທະບັດ ທຫລ, ພັນທະບັດກະຊວງການເງິນ ຫຼື ຫຼັກຊັບອື່ນ ຕາມການກຳນົດຂອງ ທຫລ ທີ່ບໍ່ມີພາລະຜູກພັນທາງການເງິນ ເຊັ່ນ ການຂາຍຝາກ, ການຄ້ຳປະກັນ, ການປະກອບ ທຶນ ແລະ ການດຳເນີນທຸລະກຳທາງການເງິນອື່ນ ທີ່ເຮັດໃຫ້ເກີດພາລະຜູກພັນທາງການເງິນ.

ມາດຕາ 4 ຂອບເຂດການນຳໃຊ້

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບ ກົມພາຍໃນ ທຫລ ແລະ ທະນາຄານທຸລະກິດ ທີ່ເຄື່ອນໄຫວກ່ຽວຂ້ອງ ກັບວຽກງານເງິນແຮຝາກບັງຄັບ.

ໝວດທີ 2
ປະເພດເງິນຝາກ, ໜີ້ສິນ, ໄລຍະຖານ, ໄລຍະຮັກສາ, ອັດຕາສ່ວນ ແລະ ສະກຸນເງິນທີ່ຕ້ອງແຮຝາກບັງຄັບ

ມາດຕາ 5 ປະເພດເງິນຝາກ ແລະ ໜີ້ສິນ ທີ່ຕ້ອງແຮຝາກບັງຄັບ

ປະເພດເງິນຝາກ ແລະ ໜີ້ສິນ ທີ່ຕ້ອງແຮຝາກບັງຄັບ ມີດັ່ງນີ້:

1. ເງິນຝາກທຸກປະເພດຂອງລູກຄ້າ ທີ່ເປັນ ບຸກຄົນ ແລະ ນິຕິບຸກຄົນ ຂອງທະນາຄານທຸລະກິດ ທີ່ມີອາຍຸ ໜຶ່ງ ປີ ລົງມາ ຫຼື ຕາມການກຳນົດຂອງ ທຫລ;

2. ໜີ້ສິນໄລຍະສັ້ນທັງໝົດທີ່ເປັນພັນທະທາງການເງິນ ຂອງທະນາຄານທຸລະກິດ.

ມາດຕາ 6 ໄລຍະຖານ, ໄລຍະຮັກສາ ແລະ ອັດຕາສ່ວນ ເງິນແຮຝາກບັງຄັບ

ໄລຍະຖານ ແລະ ໄລຍະຮັກສາ ທີ່ໃຊ້ຄິດໄລ່ເງິນແຮຝາກບັງຄັບຂອງທະນາຄານທຸລະກິດ ແມ່ນ ຮອບ ໄລຍະເວລາ ສິບສີ່ວັນ ຫຼື ຕາມການກຳນົດຂອງ ທຫລ ແຕ່ລະໄລຍະ. ສຳລັບອັດຕາສ່ວນເງິນແຮຝາກບັງຄັບ ໃຫ້ປະຕິບັດຕາມການກຳນົດຂອງ ທຫລ ໃນແຕ່ລະໄລຍະ.

ມາດຕາ 7 ສະກຸນເງິນທີ່ຕ້ອງແຮຝາກບັງຄັບ

ທະນາຄານທຸລະກິດ ຕ້ອງປະຕິບັດເງິນແຮຝາກບັງຄັບໄວ້ຢູ່ ທຫລ ທັງສະກຸນເງິນກີບ ແລະ ສະກຸນ ເງິນຕ່າງປະເທດ ຕາມຈຳນວນເງິນຝາກ ແລະ ໜີ້ສິນໄລຍະສັ້ນ ທີ່ ທຫລ ກຳນົດ.

ໝວດທີ 3
ການຄິດໄລ່, ການນຳໃຊ້ ແລະ ການຮັກສາ ເງິນແຮຝາກບັງຄັບ

ມາດຕາ 8 ການຄິດໄລ່ເງິນແຮຝາກບັງຄັບ

ການຄິດໄລ່ເງິນແຮຝາກບັງຄັບ ໃຫ້ປະຕິບັດຕາມວິທີການ ດັ່ງນີ້:

1. ຈຳນວນເງິນທີ່ຕ້ອງແຮຝາກບັງຄັບໄວ້ຢູ່ ທຫລ ໃນໄລຍະຮັກສາ ເທົ່າກັບ ຜົນລວມຂອງຍອດເຫຼືອບັນຊີເງິນຝາກລູກຄ້າ ແລະ ໜີ້ສິນໄລຍະສັ້ນ ຂອງທະນາຄານທຸລະກິດສະເລ່ຍຕາມໄລຍະຖານ ຄູນໃຫ້ອັດຕາສ່ວນເງິນແຮຝາກບັງຄັບ;

2. ການຄິດໄລ່ຍອດເຫຼືອບັນຊີເງິນຝາກລູກຄ້າຂອງທະນາຄານທຸລະກິດສະເລ່ຍ ໃຫ້ລວມເອົາຍອດເຫຼືອທ້າຍວັນບັນຊີເງິນຝາກລູກຄ້າຂອງທະນາຄານທຸລະກິດ ຫາໃຫ້ຈຳນວນວັນຂອງໄລຍະຖານ;

3. ການຄິດໄລ່ຍອດເຫຼືອໜີ້ສິນໄລຍະສັ້ນຂອງທະນາຄານທຸລະກິດສະເລ່ຍ ໃຫ້ລວມເອົາຍອດເຫຼືອໜີ້ສິນໄລຍະສັ້ນທ້າຍວັນຕາມໄລຍະຖານ ຫາໃຫ້ຈຳນວນວັນຂອງໄລຍະຖານ.

ມາດຕາ 9 ການນຳໃຊ້ບັນຊີເງິນແຮຝາກບັງຄັບ

ບັນຊີເງິນແຮຝາກບັງຄັບ ແມ່ນ ບັນຊີທີ່ທະນາຄານທຸລະກິດເປີດໄວ້ ຢູ່ກົມບໍລິການທະນາຄານ.

ທະນາຄານທຸລະກິດ ສາມາດນຳໃຊ້ບັນຊີເງິນແຮຝາກບັງຄັບສະກຸນເງິນກີບ ເຂົ້າໃນການຊຳລະສະສາງ ແລະ ດັດສົມສະພາບຄ່ອງໄດ້ ຕາມໄລຍະຖານທີ່ຕ້ອງຮັກສາ, ແຕ່ລະດັບບັນຊີເງິນແຮຝາກບັງຄັບສະເລ່ຍ ສິບສີ່ວັນ ຕ້ອງເທົ່າກັບ ຫຼື ຫຼາຍກວ່າ ລະດັບເງິນແຮຝາກບັງຄັບ ທີ່ຕ້ອງຮັກສາໄວ້ໃນໄລຍະຮັກສາ.

ທະນາຄານທຸລະກິດ ສາມາດນຳໃຊ້ບັນຊີເງິນແຮຝາກບັງຄັບສະກຸນເງິນຕາຕ່າງປະເທດ ເຂົ້າໃນການຊຳລະສະສາງ ແລະ ດັດສົມສະພາບຄ່ອງໄດ້ ຕາມໄລຍະຖານທີ່ຕ້ອງຮັກສາ, ແຕ່ລະດັບບັນຊີເງິນແຮຝາກບັງຄັບ ໃນແຕ່ລະທ້າຍວັນ ຕ້ອງເທົ່າກັບລະດັບເງິນແຮຝາກບັງຄັບ ທີ່ຕ້ອງຮັກສາໄວ້ໃນໄລຍະຮັກສາ.

ມາດຕາ 10 ການຮັກສາລະດັບເງິນແຮຝາກບັງຄັບ

ທະນາຄານທຸລະກິດ ຕ້ອງຮັກສາລະດັບເງິນແຮຝາກບັງຄັບໄວ້ຢູ່ ທຫລ ໃຫ້ຄົບຖ້ວນ ດັ່ງນີ້:

1. ຮັກສາຍອດເຫຼືອບັນຊີເງິນແຮຝາກບັງຄັບສະກຸນເງິນກີບສະເລ່ຍ ສິບສີ່ວັນ ຂອງໄລຍະຮັກສາ ບໍ່ໃຫ້ຕ່ຳກວ່າລະດັບເງິນແຮຝາກບັງຄັບ ທີ່ຕ້ອງຮັກສາໄວ້ໃນໄລຍະຮັກສາ;

2. ຮັກສາຍອດເຫຼືອບັນຊີເງິນແຮຝາກບັງຄັບສະກຸນເງິນຕາຕ່າງປະເທດໃນແຕ່ລະທ້າຍວັນ ຂອງໄລຍະຮັກສາ ບໍ່ໃຫ້ຕ່ຳກວ່າລະດັບເງິນແຮຝາກບັງຄັບ ທີ່ຕ້ອງຮັກສາໄວ້ໃນໄລຍະຮັກສາ.

ໃນການຮັກສາເງິນແຮຝາກບັງຄັບໄວ້ຢູ່ ທຫລ ໃຫ້ຮັກສາເປັນເງິນສົດ ແລະ ເປັນຫຼັກຊັບທີ່ບໍ່ມີພາລະຜູກພັນ ໃນອັດຕາສ່ວນໃດໜຶ່ງ ຕາມການກຳນົດຂອງ ທຫລ.

ໝວດທີ 4
ສິດ ແລະ ໜ້າທີ່ ຂອງພາກສ່ວນທີ່ກ່ຽວຂ້ອງ

ມາດຕາ 11 ສິດ ແລະ ໜ້າທີ່ ຂອງກົມນະໂຍບາຍເງິນຕາ

ກົມນະໂຍບາຍເງິນຕາ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າສ້າງນິຕິກຳກ່ຽວກັບເງິນແຮຝາກບັງຄັບ ໃນຂອບເຂດສິດຂອງຕົນ;

2. ຄົ້ນຄວ້າປັບປຸງອັດຕາສ່ວນເງິນແຮຝາກບັງຄັບຂອງທະນາຄານທຸລະກິດ, ໂຄ້ງສ້າງເງິນແຮຝາກບັງຄັບ, ປະເພດເງິນຝາກ ແລະ ໜີ້ສິນທີ່ຕ້ອງແຮຝາກບັງຄັບ, ໄລຍະຖານ ແລະ ໄລຍະຮັກສາ ເພື່ອສະເໜີຜູ້ວ່າການພິຈາລະນາ;

3. ຄົ້ນຄວ້າມາດຕະການ ໃນກໍລະນີເງິນແຮຝາກບັງຄັບບໍ່ພຽງພໍ;

4. ປະສານສົມທົບກັບກົມກ່ຽວຂ້ອງ ໃນການຄົ້ນຄວ້າປັບປຸງລະບົບລາຍງານ, ຕິດຕາມ ແລະ ຄິດໄລ່ເງິນແຮຝາກບັງຄັບ ໃຫ້ທັນສະໄໝ, ລວມສູນ ແລະ ສາມາດເຊື່ອມໂຍງກັບລະບົບອື່ນ;

5. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 12 ສິດ ແລະ ໜ້າທີ່ ຂອງກົມບໍລິການທະນາຄານ

ກົມບໍລິການທະນາຄານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ສ້າງນິຕິກຳ ກ່ຽວກັບການຈັດຕັ້ງປະຕິບັດເງິນແຮຝາກບັງຄັບ ໃນຂອບເຂດສິດຂອງຕົນ;

2. ກຳນົດແບບພິມລາຍງານ, ຕາຕະລາງແຜນການລາຍງານໄລຍະຖານຄິດໄລ່ ແລະ ໄລຍະຖານຮັກສາເງິນແຮຝາກບັງຄັບ ເປັນປະຈຳປີ;

3. ກວດກາ ການຄິດໄລ່ ແລະ ແຈ້ງຈຳນວນເງິນແຮຝາກບັງຄັບ ໃນໄລຍະຮັກສາຮອບຕໍ່ໄປ ໃຫ້ທະນາຄານທຸລະກິດ ພາຍໃນ ສາມວັນ ລັດຖະການ ກ່ອນວັນຈັດຕັ້ງປະຕິບັດໄລຍະຮັກສາເງິນແຮຝາກບັງຄັບໃນຖານໃໝ່;

4. ຕິດຕາມ ກວດກາ ການຮັກສາລະດັບເງິນແຮຝາກບັງຄັບຂອງທະນາຄານທຸລະກິດ;

5. ສັງລວມລາຍງານກ່ຽວກັບການປະຕິບັດເງິນແຮຝາກບັງຄັບຂອງທະນາຄານທຸລະກິດ ໃຫ້ກົມນະໂຍບາຍເງິນຕາ, ກົມຄຸ້ມຄອງທະນາຄານທຸລະກິດ ພາຍໃນ ຫ້າວັນ ລັດຖະການ ນັບແຕ່ວັນສິ້ນສຸດຂອງໄລຍະຮັກສາ ເປັນຕົ້ນໄປ ແລະ ລາຍງານຂັ້ນເທິງ ກໍລະນີການຈັດຕັ້ງປະຕິບັດເງິນແຮຝາກບັງຄັບຂອງທະນາຄານທຸລະກິດ ຜິດປົກກະຕິ;

6. ປະສານສົມທົບກັບກົມກ່ຽວຂ້ອງ ໃນການຄົ້ນຄວ້າປັບປຸງລະບົບລາຍງານ, ຕິດຕາມ ແລະ ຄິດໄລ່ ເງິນແຮຝາກບັງຄັບ ໃຫ້ທັນສະໄໝ, ລວມສູນ ແລະ ສາມາດເຊື່ອມໂຍງກັບລະບົບອື່ນ ພ້ອມທັງການນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້;

7. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 13 ສິດ ແລະ ໜ້າທີ່ ຂອງກົມຄຸ້ມຄອງທະນາຄານທຸລະກິດ

ກົມຄຸ້ມຄອງທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ເກັບກຳ ແລະ ກວດກາ ການຄິດໄລ່ຂໍ້ມູນເງິນຝາກ ແລະ ໜີ້ສິນໄລຍະສັ້ນ ທີ່ຈະນຳມາຄິດໄລ່ເງິນແຮຝາກບັງຄັບ ເພື່ອເປັນບ່ອນອີງໃຫ້ແກ່ກົມບໍລິການທະນາຄານ ໃນການຈັດຕັ້ງປະຕິບັດ;

2. ຕິດຕາມສະພາບຄ່ອງຂອງທະນາຄານທຸລະກິດ;

3. ສະໜອງຂໍ້ມູນທີ່ຕິດພັນກັບເງິນແຮຝາກບັງຄັບ ໃຫ້ແກ່ກົມບໍລິການທະນາຄານ ແລະ ກົມນະໂຍບາຍເງິນຕາ;

4. ນຳໃຊ້ມາດຕະການຕໍ່ທະນາຄານທຸລະກິດ ທີ່ລະເມີດຂໍ້ຕົກລົງສະບັບນີ້;

5. ປະສານສົມທົບກັບກົມກ່ຽວຂ້ອງ ໃນການຄົ້ນຄວ້າປັບປຸງລະບົບລາຍງານ, ຕິດຕາມ ແລະ ຄິດໄລ່ ເງິນແຮຝາກບັງຄັບ ໃຫ້ທັນສະໄໝ, ລວມສູນ ແລະ ສາມາດເຊື່ອມໂຍງກັບລະບົບອື່ນ;

6. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 14 ສິດ ແລະ ໜ້າທີ່ ຂອງກົມບັນຊີແລະການເງິນ

ກົມບັນຊີແລະການເງິນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຄົ້ນຄວ້າກຳນົດເລກໝາຍບັນຊີເງິນແຮຝາກບັງຄັບ;
2. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ມາດຕາ 15 ສິດ ແລະ ໜ້າທີ່ ຂອງທະນາຄານທຸລະກິດ

ທະນາຄານທຸລະກິດ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັກສາລະດັບເງິນແຮຝາກບັງຄັບໃຫ້ພຽງພໍ ຕາມການກຳນົດຂອງ ທຫລ;
2. ຄິດໄລ່ ແລະ ລາຍງານຍອດເງິນຝາກລູກຄ້າທຸກປະເພດ ແລະ ໜີ້ສິນໄລຍະສັ້ນຂອງທະນາຄານທຸລະກິດ ສະເລ່ຍໃນໄລຍະຖານ ໃຫ້ກົມບໍລິການທະນາຄານ ພາຍໃນ ສາມວັນ ລັດຖະການ ນັບແຕ່ວັນສິ້ນສຸດໄລຍະຮັກສາ ເປັນຕົ້ນໄປ;
3. ລາຍງານ ກ່ຽວກັບເງິນແຮຝາກບັງຄັບ ຕາມແບບພິມລາຍງານ ແລະ ກົນໄກການລາຍງານ ໃຫ້ກົມບໍລິການທະນາຄານ ສອງອາທິດ ຕໍ່ຄັ້ງ ຕາມລະບຽບການລາຍງານທີ່ ທຫລ ກຳນົດ;
4. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມກົດໝາຍ ແລະ ລະບຽບການ.

ໝວດທີ 5
ຂໍ້ຫ້າມ ແລະ ມາດຕະການຕໍ່ຜູ້ລະເມີດ

ມາດຕາ 16 ຂໍ້ຫ້າມສຳລັບທະນາຄານທຸລະກິດ

ຫ້າມທະນາຄານທຸລະກິດ ມີພຶດຕິກຳ ດັ່ງນີ້:

1. ບໍ່ລາຍງານຂໍ້ມູນ ຫຼື ລາຍງານຂໍ້ມູນທີ່ມີລັກສະນະບິດເບືອນຄວາມເປັນຈິງ ແລະ ຊັກຊ້າ;
2. ນຳໃຊ້ເງິນແຮຝາກບັງຄັບ ເຂົ້າໃນການດຳເນີນທຸລະກຳທີ່ມີພຶດຕິກຳປັ່ນປ່ວນ;
3. ຮັກສາອັດຕາສ່ວນເງິນແຮຝາກບັງຄັບຕ່ຳກວ່າລະດັບທີ່ ທຫລ ກຳນົດ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

ມາດຕາ 17 ມາດຕະການຕໍ່ຜູ້ລະເມີດ

ທະນາຄານທຸລະກິດ ທີ່ລະເມີດຂໍ້ຫ້າມໃນມາດຕານີ້ ຈະຖືກມາດຕະການ ດັ່ງນີ້:

1. ບໍ່ລາຍງານຂໍ້ມູນ ຫຼື ລາຍງານຂໍ້ມູນທີ່ມີລັກສະນະບິດເບືອນຄວາມເປັນຈິງ ແລະ ຊັກຊ້າ ເປັນຄັ້ງທຳອິດ ຈະຖືກສຶກສາອົບຮົມ, ກ່າວເຕືອນ ພ້ອມທັງເຮັດບົດບັນທຶກ, ແຕ່ຖ້າຍັງບໍ່ສາມາດແກ້ໄຂ ແລະ/ຫຼື ສືບຕໍ່ລະເມີດຊ້ຳ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:
   1.1. ຄັ້ງທີໜຶ່ງ ຈະຖືກປັບໃໝ 10,000,000 ກີບ ຕໍ່ວັນ;
   1.2. ຄັ້ງທີສອງ ຈະຖືກປັບໃໝ 20,000,000 ກີບ ຕໍ່ວັນ;
   1.3. ຄັ້ງທີສາມຂຶ້ນໄປ ຈະຖືກປັບໃໝ 50,000,000 ກີບ ຕໍ່ວັນ.
2. ບໍ່ສາມາດຮັກສາລະດັບເງິນແຮຝາກບັງຄັບ ສະກຸນເງິນກີບ ຕາມການກຳນົດຂອງ ທຫລ ຈະຖືກປັບໃໝ ຕາມແຕ່ລະກໍລະນີ ດັ່ງນີ້:
   2.1. ບໍ່ສາມາດຮັກສາລະດັບເງິນແຮຝາກບັງຄັບ ຕາມລະດັບທີ່ຕ້ອງຮັກສາໃນໄລຍະ ໜຶ່ງ ຫາ ສິບສີ່ວັນ ຈະຖືກປັບໃໝ 150% ຂອງອັດຕາດອກເບ້ຍພື້ນຖານ ທຫລ;

2.2. ບໍ່ສາມາດຮັກສາລະດັບເງິນແຮຝາກບັງຄັບ ຕາມລະດັບທີ່ຕ້ອງຮັກສາໃນໄລຍະ ສິບຫ້າ ຫາ ຊາວແປດ ວັນ ຈະຖືກປັບໃໝ 180% ຂອງອັດຕາດອກເບ້ຍພື້ນຖານ ທຫລ;

2.3. ບໍ່ສາມາດຮັກສາລະດັບເງິນແຮຝາກບັງຄັບ ຕາມລະດັບທີ່ຕ້ອງຮັກສາໃນໄລຍະ ຊາວເກົ້າ ຫາ ສີ່ ສິບສອງ ວັນ ຈະຖືກປັບໃໝ 200% ຂອງອັດຕາດອກເບ້ຍພື້ນຖານ ທຫລ.

3. ບໍ່ສາມາດຮັກສາລະດັບເງິນແຮຝາກບັງຄັບ ສະກຸນເງິນຕາຕ່າງປະເທດ ຕາມການກຳນົດຂອງ ທຫລ ຈະຖືກປັບໃໝ ໃນອັດຕາທີ່ ທຫລ ກຳນົດ.

ນອກຈາກມາດຕະການ ຕາມທີ່ໄດ້ກຳນົດໄວ້ໃນວັກທີໜຶ່ງຂອງມາດຕານີ້ແລ້ວ ທະນາຄານທຸລະກິດທີ່ ລະເມີດ ຍັງຈະຖືກເຜີຍແຜ່ຂໍ້ມູນການລະເມີດລະບຽບການຂອງຕົນ ໃນເວັບໄຊພາຍໃນລະບົບທະນາຄານ.

ໝວດທີ 6
ບົດບັນຍັດສຸດທ້າຍ

ມາດຕາ 18 ການຈັດຕັ້ງປະຕິບັດ

ກົມນະໂຍບາຍເງິນຕາ, ກົມບໍລິການທະນາຄານ, ກົມຄຸ້ມຄອງທະນາຄານທຸລະກິດ ແລະ ກົມບັນຊີ ແລະການເງິນ ເປັນເຈົ້າການໃນການຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ໃຫ້ໄດ້ຮັບຜົນດີ;

ທະນາຄານທຸລະກິດ ຈົ່ງຮັບຮູ້ ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 19 ຜົນສັກສິດ

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ຂໍ້ຕົກລົງສະບັບນີ້ ປ່ຽນແທນຂໍ້ຕົກລົງວ່າດ້ວຍເງິນແຮຝາກບັງຄັບ ສະບັບເລກທີ 556/ທຫລ, ລົງວັນ ທີ 17 ກໍລະກົດ 2018.

ຜູ້ວ່າການ

ທະນາຄານແຫ່ງ ສ.ປ.ປ ລ ຜູ້ວ່າການ

ບຸນຄຳ ວໍລະຈິດ